**SWIS-H**
STATEWIDE INFANT
SCREENING - HEARING



# ເປັນຫຍັງລູກນ້ອຍຂ້ອຍຈຶ່ງຕ້ອງມີການກວດການຟັງສຽງ?

ລູກຂອງທ່ານຈະຖືກສເນີໃຫ້ມີການກວດສຸຂພາບຫຼາຍຢ່າງໃນລະຍະສອງສາມອາທິດທີ່ເກີດມາ. ນຶ່ງໃນການກວດເຫຼົ່ານີ້ ແມ່ນກວດເບິ່ງການເສັຍຫູ. ການກວດເບິ່ງຄວາມສາມາດໃນການຟັງຈະມີໃຫ້ໃນທັນທີຫຼັງຈາກການຄອດ.

ຖ້າວ່າບໍ່ສາມາດກວດໄດ້ໃນຂະນະທີ່ທ່ານ ແລະ ລູກທ່ານຍັງຢູ່ໂຮງໝໍ ທ່ານກໍຈະຖືກສເນີໃຫ້ມີການກວດການຟັງສຽງສໍາລັບລູກທ່ານແບບເປັນຄົນປ່ວຍນອກ ຫຼື ທີ່ສູນຊຸມຊົນທ້ອງຖິ່ນ ໃນທັນທີຫຼັງຈາກທີ່ອອກຈາກໂຮງໝໍ.

## ເປັນຫຍັງລູກນ້ອຍຂ້ອຍຈຶ່ງຕ້ອງມີການກວດການຟັງສຽງ?

ມີເດັກປະມານນຶ່ງຫາສອງໃນຈໍານວນ ເດັກ ທຸກໆ1000ຄົນທີ່ເກີດມາຈະມີອາການເສັຍຫູຢ່າງໜັກ.

ມັນເປັນສິ່ງສໍາຄັນທີ່ຕ້ອງຊອກຮູ້ໃຫ້ໄວເທົ່າທີ່ໄວໄດ້ວ່າລູກທ່ານໄດ້ຍິນສຽງດີປານໃດເພື່ອວ່າທ່ານແລະລູກທານສາ ມາດໄດ້ຮັບຄໍາແນະນໍາທີ່ຖືກຕ້ອງພ້ອມທັງການອູ້ມຊູ. ພໍເຖິງເວລາທີ່ບັນດາເດັກເວົ້າຄໍາທໍາອິດຂອງພວກເຂົາໄດ້ພວກເຂົາໄດ້ຟັງວິທີທີ່ພວກເຮົາເວົ້າມາໄດ້ປະ ມານນຶ່ງປີແລ້ວ.

## ການກວດລູກຂ້ອຍນີ້ຈະພົວພັນຫຍັງແດ່?

ຜູ້ກວດການຟັງສຽງທີ່ໄດ້ຮັບການເຝິກຫັດມາແລ້ວຈະດໍາເນີນການກວດໃນຂະນະທີ່ລູກທ່ານພວມຫຼັບຫຼືພັກຜ່ອນງຽບໆ.ຍິນດີໃຫ້ທ່ານຢູ່ກັບລູກທ່ານໃນຂະນະທີ່ທໍາ ການກວດຢູ່.

ຜູ້ກວດຈະໃຊ້ເອົາແຜ່ນເຊັນເຊີນ້ອຍໆວາງໃສ່ເທິງຫົວຂອງລູກທ່ານແລະເປີດສຽງກລິ໊ກໆຄ່ອຍໆເຂົ້າໃສ່ຫູຂອງເດັກໂດຍຜ່ານເຄື່ອງໃສ່ຫູສໍາລັບຟັງ. ແຜ່ນເຊັນເຊີຈະບັນທຶກການຕອບຮັບຕໍ່ສຽງຂອງລູກທ່ານໄວ້.

ຕາມປົກກະຕິແລ້ວ ການກວດນີ້ຈະບໍ່ເຮັດໃຫ້ເດັກບໍ່ສະຫງົບ. ການກວດນີ້ອາດຈະໃຊ້ເວລາ 10-20ນາທີຈຶ່ງແລ້ວເສັດ.

## ຜົນຮັບ

ໃນທັນທີທີ່ການກວດການຟັງສຽງແລ້ວເສັດ ຜົນຮັບກໍຈະຖືກອະທິບາຍໃຫ້ທ່ານຟັງ ແລະ ຈະຖືກບັນທຶກໄວ້ຢູ່ໃນປຶ້ມບັນທຶກສຸຂະພາບສ່ວນຕົວສີຟ້າ (Blue Book) ຂອງລູກທ່ານ.

ຖ້າວ່າຜົນຮັບສະແດງໃຫ້ເຫັນວ່າຕ້ອງມີ ການກວດຊໍ້າອີກຄັ້ງນຶ່ງກໍບໍ່ຈໍາເປັນຕ້ອງໝາຍຄວາມວ່າລູກທ່ານໄດ້ສູນເສັຍການຟັງ. ມັນອາດຈະມີເຫດຜົນອື່ນໆໃນຜົນຮັບນີ້. ເຫດຜົນອັນປົກກະຕິຂອງການຕ້ອງມີການກວດຊໍ້າອີກນີ້ກໍຄືມີນໍ້າ ຫຼື ການອຸດຕັນຢູ່ໃນຫູຂອງລູກທ່ານຫຼັງຈາກການຄອດ.

## ຂ້ອຍຕ້ອງເຮັດຫຍັງແດ່ໃນຂນະທີ່ລູກຂ້ອຍເຕີບໃຫຍ່ຂຶ້ນ?

ການໄດ້ຍິນອາດຈະບໍ່ມີສະພາບຄືເກົ່າເມື່ອ ເວລາຜ່ານໄປ.

ມັນເປັນສິ່ງສໍາຄັນໃນການຄວບຄຸມການ ພັທນາການເວົ້າແລະພາສາຂອງລູກທ່ານ ພ້ອມທັງການຕອບຮັບຕໍ່ສຽງຂອງພວກເຂົາອີກນໍາ.

ທ່ານສາມາດເບິ່ງບັນຊີການກວດຢູ່ໃນໜ້າຕໍ່ໄປເພື່ອຄວບຄຸມຄວາມກ້າວໜ້າຂອງລູກທ່ານ.

ຖ້າທ່ານເປັນກັງວົນໃນການພັທນາຂອງການຟັງສຽງ ຫຼື ການເວົ້າແລະພາສາຂອງລູກທ່ານໃນອະນາຄົດ ກະຣຸນາຈັດໃຫ້ລູກທ່ານໄປກວດການຟັງສຽງ. ຈົ່ງສອບຖາມ ທ່ານໝໍຄອບຄົວຂອງທ່ານເພື່ອໃຫ້ເພິ່ນ ແນະນໍາສົ່ງໄປຫາບໍຣິການທີ່ເໝາະສົມເພື່ອກວດ ການຟັງສຽງ ຂອງລູກທ່ານ.

ການຟັງສຽງສາມາດກວດໄດ້ ບໍ່ວ່າອາຍຸ ຈະຢູ່ໃນຂັ້ນໃດ.

**ເພື່ອເອົາຂໍ້ມູນເພີ້ມຕື່ມ ກະຣຸນາເຂົ້າຢ້ຽມເບິ່ງເວັບໄຊຕ໌ທີ່ຢູ່ຂ້າງລຸ່ມນີ້:**

http://www.health.nsw.gov.au/kids-families

ການຕິດຕໍ່ໃນທ້ອງຖິ່ນ/ຣາຍລະອຽດຂອງການນັດໝາຍ

ເພື່ອຊອກເອົາຄໍາແນະນໍາດ້ານສຸຂພາບ ຈົ່ງ ຕິດຕໍ່ *healthdirect Australia*
http://www.healthdirect.gov.au/
**1800 022 222**

NSW GOVERNMENT | Health

SWIS-H
STATEWIDE INFANT
SCREENING - HEARING

# ບັນຊີກວດການຟັງສຽງ

| | |
|---|---|
| **ເກີດໃໝ່ ຫາ 3 ເດືອນ** | ມີປະຕິກິຣິຍາຕໍ່ສຽງດັງ |
| | ກາຍເປັນມິດງຽບຕໍ່ສຳນຽງ ຫຼື ສຽງທີ່ລື້ງເຄີຍ |
| | ເຮັດສຽງກູກູ |
| | ຕອບຮັບຕໍ່ຄວາມເວົ້າດ້ວຍການເບິ່ງໜ້າຄົນເວົ້າ |
| **3 -6 ເດືອນ** | ຫຼຽວຕາມ ຫຼື ຫັນຫົວໄປຫາສຽງ |
| | ເລີ້ມເຮັດສຽງຄືຄຳເວົ້າ |
| | ຫົວແລະເຮັດສຽງຕ່າງໆເພື່ອສະແດງໃຫ້ຮູ້ວ່າເຂົາເຈົ້າຮູ້ສຶກຢ່າງໃດ |
| **6 – 9 ເດືອນ** | ແບແບ “ດາດາ” “ມາມາ” “ບາບາ” |
| | ຮ້ອງ/ອອກສຽງເພື່ອຮຽກຮ້ອງຄວາມສົນໃຈ |
| | ຈະຕອບຮັບຕໍ່ຄຳວ່າ ”ບໍ່” ແລະ ຕໍ່ຊື່ຂອງຕົນເອງເລື້ອຍໆ |
| | ຕອບຮັບຕໍ່ການຮ້ອງເພງ ແລະ ດົນຕຣີ |
| **9 – 12 ເດືອນ** | ລອກລຽນສຽງຄຳເວົ້າຂອງຄົນອື່ນ |
| | ເຂົ້າໃຈຄຳເວົ້າງ່າຍໆ ເຊັ່ນ “ໝາກບານ” “ໝາ” “ພໍ່” |
| | ຫັນຫົວໄປຫາສຽງທີ່ດັງຄ່ອຍໆ |
| | ເລີ້ມເວົ້າຄຳທຳອິດ |
| **12 – 18 ເດືອນ** | ປະກົດວ່າເຂົ້າໃຈໃນຄຳເວົ້າໃໝ່ໆໃນແຕ່ລະອາທິດ |
| | ເຮັດຕາມຄຳເວົ້າບອກງ່າຍໆ ເຊັ່ນ ”ໄປເອົາໝາກບານ” |
| | ຊີ້ໄປຫາຄົນ ສ່ວນຕ່າງໆຂອງຮ່າງກາຍ ຫຼື ຂອງຫຼິ້ນໃນເມື່ອຖືກຖາມ |
| | ສືບຕໍ່ການຮຽນເວົ້າຄຳໃໝ່ໆເຖິງແມ່ນວ່າຈະບໍ່ຊັດແຈ້ງກໍຕາມ |
| **18 – 24 ເດືອນ** | ມີຄຳເວົ້າລະຫວ່າງ 100 – 200ຄຳທີ່ພວກເຂົາໃຊ້ເປັນປະຈຳ |
| | ຟັງນິທານງ່າຍໆ ຫຼື ເພງ |
| | ປະສົມສອງຫຼືຫຼາຍຄຳເວົ້າເຂົ້າເປັນປໂຍກສັ້ນໆ ເຊັ່ນ “ຂໍນ້ຳໝາກໄມ້ຕື່ມອີກ” |

**ໝາຍເຫດ:**

NSW GOVERNMENT | Health

© NSW Health September 2016 SHPN (NKF) 150177